# ສິດຄອບຄອງນຳໃຊ້ທີ່ດິນປ່າໄມ້ລັດ ຢູ່ ສປປ ລາວ

**ບົດສັງລວມຫຍໍ້**

ເດືອນທັນວາ 2021



*ຮູບພາບ: ພູຜາປ່າດົງອ້ອມຮອບບ້ານປາກຂ່າ, ເມືອງຫົວເມືອງ, ແຂວງຫົວພັນ (ພາບຖ່າຍໂດຍ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ)*

## ປະເດັນ

ລັດຖະບານ ສປປ ລາວ ມີຄວາມຄືບໜ້າໃນການບັນລຸເປົ້າໝາຍ ການອອກໃບຕາດິນໃຫ້ແກ່ທີ່ດິນທຸກຕອນໃນຂອບເຂດທົ່ວປະເທດທີ່ມີເງື່ອນໄຂຄົບຖ້ວນ ເພື່ອປົກປ້ອງສິດຄອບຄອງນຳໃຊ້ຂອງຊາວກະສິກອນ ແລະ ຜູ້ຖືຄອງທີ່ດິນສ່ວນບຸກຄົນ. ຢ່າງໃດກໍຕາມ, ຄວາມພະຍາຍາມດັ່ງກ່າວຍັງບໍ່ກວມເອົາ **ຊຸມຊົນທີ່ອາໄສຢູ່ໃນທີ່ດິນຂອງສາມປະເພດປ່າ (ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ) ແລະ ສິດຄອບຄອງນຳໃຊ້ທີ່ດິນຂອງເຂົາເຈົ້າຈຶ່ງຍັງສືບຕໍ່ມີຄວາມສ່ຽງ.** ໃນປັດຈຸບັນ, ເອກະສານທາງການຂອງຜູ້ຖືຄອງນຳໃຊ້ທີ່ດິນປ່າໄມ້ ແມ່ນມີພຽງແຕ່ໃບຮັບເງິນຈາກການເສຍພາສີທີ່ດິນ ແລະ ແຜນທີ່ການນຳໃຊ້ທີ່ດິນເທົ່ານັ້ນ, ໃນຂະນະທີ່ລັດຖະບານກຳລັງປັບປຸງປະເພດ ແລະ ຄວາມຖືກຕ້ອງຕາມກົດໝາຍຂອງເອກະສານຢັ້ງຢືນສິດນຳໃຊ້ ແລະ ສິດຄອບຄອງນຳໃຊ້ທີ່ດິນ.

ໃນກອງປະຊຸມລະຫວ່າງກະຊວງ ໃນເດືອນກໍລະກົດ 2021, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ) ແລະ ກະຊວງ ກະສິກຳ ແລະ ປ່າໄມ້ (ກປ) ໄດ້ເຫັນດີເປັນເອກະພາບກັນກ່ຽວກັບຫຼັກການລວມໃຫ້ສາມາດອອກໃບຕາດິນແກ່ຜູ້ຖືຄອງທີ່ດິນປຸກສ້າງທີ່ຢູ່ອາໄສ ແລະ ທີ່ດິນກະສິກຳຖາວອນ ໃນບັນດາບ້ານທີ່ຕັ້ງຢູ່ໃນທີ່ດິນຂອງສາມປະເພດປ່າ ທີ່ເປັນການນຳໃຊ້ກ່ອນການກຳນົດເຂດດັ່ງກ່າວເປັນທີ່ດິນປ່າ ໄມ້ຢ່າງເປັນທາງການ. ສ່ວນການນຳໃຊ້ທີ່ດິນແບບບໍ່ຖາວອນ ແມ່ນສາມາດອອກໃບຢັ້ງຢືນການນຳໃຊ້ທີ່ດິນໃຫ້. **ແຕ່ກໍຍັງບໍ່ມີລະບຽບການກ່ຽວກັບບັນຫານີ້ເທື່ອ.**

**ກົດໝາຍວ່າດ້ວຍທີ່ດິນ ບໍ່ໄດ້ກຳນົດລັກສະນະຂອງສິດພາຍໃຕ້**ໃບຢັ້ງຢືນການນຳໃຊ້ທີ່ດິນ ແລະ ບໍ່ໄດ້ລະບຸແຈ້ງວ່າສິດເຫຼົ່ານີ້ມີລັກສະນະຊົ່ວຄາວ ຫຼື ຖາວອນ. ຂັ້ນຕອນການຈັດສັນມອບສິດຕໍ່ທີ່ດິນ ແລະ ການອອກເອກະສານສິດຄອບຄອງນຳໃຊ້ທີ່ດິນຕ້ອງມີຄວາມກະຈ່າງແຈ້ງເພີ່ມເຕີມ ໂດຍປະຕິບັດຕາມບົດບັນຍັດຂອງກົດໝາຍປ່າໄມ້. **ມັນບໍ່ທັນຈະແຈ້ງເທື່ອວ່າເຄື່ອງມືການວາງແຜນພາກບັງຄັບ ແລະ ມາດຕະຖານຂັ້ນຕ່ຳສຸດອັນໃດ ທີ່ຈະຖືກນຳໃຊ້**ໃນການກຳນົດໝາຍເງື່ອນໄຂສຳລັບສິດຄອບຄອງນຳໃຊ້ທີ່ດິນປະເພດຕ່າງໆຢູ່ໃນທີ່ດິນປ່າໄມ້.

## ຄວາມເປັນມາ

ມີປະມານ 3,000 ບ້ານ ຕັ້ງຢູ່ໃນທີ່ດິນຂອງສາມປະເພດປ່າ ຊຶ່ງກວມເອົາເກືອບ 70 ສ່ວນຮ້ອຍຂອງເນື້ອທີ່ທັງໝົດຂອງ ສປປ ລາວ. ບັນຫາສິດຄອບຄອງນຳໃຊ້ທີ່ດິນຢ່າງເປັນທາງການສຳລັບຊຸມຊົນເຫຼົ່ານີ້ ໄດ້ຖືກຍົກຂຶ້ນມາສົນທະນາດົນນານແລ້ວ. ຂໍ້ກັງວົນທົ່ວໄປທີ່ຍົກຂຶ້ນ ແມ່ນຖ້າຫາກມີການອອກໃບຕາດິນຢ່າງເປັນທາງການ, ໂດຍສະເພາະຢູ່ເຂດຫ່າງໄກສອກຫຼີກໃນທີ່ດິນປ່າໄມ້, ອາດເຮັດໃຫ້ເກີດການນຳໃຊ້ທີ່ດິນບໍ່ຖືກເປົ້າໝາຍ ເຊັ່ນ: ການຕັດໄມ້ທຳລາຍປ່າ, ການເກັງກຳໄລ ຫຼື ການພັດທະນາທີ່ດິນແບບບໍ່ຖືກກົດໝາຍ. ຢ່າງໃດກໍຕາມ, ບົດຮຽນຈາກພາກປະຕິບັດທີ່ດີທີ່ສຸດຂອງສາກົນໄດ້ສະແດງຫຼັກຖານໃຫ້ເຫັນວ່າ **ຫາກມີລະບົບການບໍລິຫານທີ່ດິນທີ່ດີ, ລວມທັງການອອກເອກະສານສິດຄອບຄອງນຳ ໃຊ້ທີ່ດິນຢ່າງເປັນທາງການໃຫ້ແກ່ຕອນດິນທີ່ໄດ້ມາຢ່າງຖືກຕ້ອງຕາມກົດໝາຍຈະຊ່ວຍຫຼຸດຜ່ອນການຊື້ຂາຍທີ່ດິນແບບບໍ່ເປັນທາງການ ແລະ ປ້ອງກັນການບຸກລຸກເຂົ້າໄປໃນທີ່ດິນປ່າສະຫງວນໄດ້ດີກວ່າ.** ຢູ່ ສປປ ລາວ, ການເຮັດທຸລະກຳກ່ຽວກັບທີ່ດິນທີ່ມີໃບຕາດິນແລ້ວ ຈະຕ້ອງຜ່ານ ຂັ້ນຕອນດ້ານບໍລິຫານຢ່າງເປັນທາງການ, ໃນຂະນະດຽວກັນ ກໍອາດມີທຸລະກຳກ່ຽວກັບທີ່ດິນ ທີ່ເຮັດຂຶ້ນແບບບໍ່ເປັນທາງການ ໂດຍການຫຼີກ ລ່ຽງຂັ້ນຕອນທາງການ ຫຼື ອາດຖືກອະນຸມັດໂດຍບໍ່ຖືກຕາມລະບຽບກົດໝາຍ.

ກ່ອນການຮັບຮອງເອົາກົດໝາຍວ່າດ້ວຍທີ່ດິນ ແລະ ກົດໝາຍວ່າດ້ວຍປ່າໄມ້ ສະບັບປັບປຸງໃນປີ 2019, ໂຄງສ້າງດ້ານລະບຽບກົດໝາຍຂອງ ສປປ ລາວ ຍັງບໍ່ໄດ້ວາງພື້ນຖານດ້ານນິຕິກຳພຽງພໍສຳລັບການຮັບຮູ້ສິດຄອບຄອງທີ່ດິນໃນເຂດທີ່ດິນປ່າໄມ້ ຢ່າງເປັນທາງການ. ປັດຈຸບັນ, ກົດໝາຍທັງສອງສະບັບ**ໄດ້ຮັບຮູ້ເຖິງການມີຊຸມຊົນອາໄສຢູ່ໃນທີ່ດິນປ່າໄມ້** ແລະ ຮັບຮູ້ສິດທົ່ວໄປໃນການດຳລົງຊີວິດ ແລະ ການທຳມາຫາກິນໃນເຂດດັ່ງກ່າວ, ແຕ່**ບໍ່ໄດ້ອະທິບາຍແຈ້ງກ່ຽວກັບວິທີການປົກປ້ອງສິດຕໍ່ທີ່ດິນຂອງຊຸມຊົນເຫຼົ່ານີ້** ຢ່າງມີປະສິດຜົນ ແລະ ໃນການຮັບປະກັນໃຫ້ຊຸມຊົນມີພັນທະຜູກພັນໃນການປົກປັກຮັກສາ ແລະ ຄຸ້ມຄອງປ່າໄມ້ໃນເຂດອ້ອມຮອບເຂົາເຈົ້າ. ບັນດາພາກສ່ວນຮັບຜິດຊອບພາກລັດຈະຕ້ອງສ້າງນິຕິກຳລຸ່ມກົດໝາຍ, ລະບຽບການ ແລະ ຄຳແນະນຳທີ່ເໝາະສົມ ເພື່ອເປັນແນວທາງທີ່ປະຕິບັດໄດ້ເພື່ອຄ້ຳປະກັນສິດຄອບຄອງນຳໃຊ້ທີ່ດິນປ່າໄມ້ລັດ ໂດຍປະຊາຊົນ.



*ຮູບພາບ: ບ້ານໜຶ່ງທີ່ຕັ້ງຢູ່ພື້ນທີ່ເນີນພູເມືອງຫົວເມືອງ, ແຂວງຫົວພັນ (ພາບຖ່າຍໂດຍ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ)*



*ຮູບພາບ: ສວນໝາກນັດ ແລະ ທົ່ງນາລຽບຕາມເສັ້ນທາງໄປເມືອງງອຍ, ແຂວງຫລວງພະບາງ (ພາບຖ່າຍໂດຍ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ)*

# ຂໍ້ສະເໜີແນະນຳ

ບັນດາອົງການທີ່ມີສ່ວນຮ່ວມໃນການສ້າງເອກະສານສະບັບນີ້ ມີຂໍ້ສະເໜີແນະນຳໃຫ້ແກ່ບັນດາພາກສ່ວນຮັບຜິດຊອບພາກລັດ ດັ່ງນີ້:

**1.** ສ້າງນິຕິກຳທີ່ເໝາະສົມ, ຊຶ່ງ**ກຳນົດໃຫ້ມີບົດບັນຍັດກ່ຽວກັບປະເພດເອກະສານສິດຄອບຄອງນຳໃຊ້**ທີ່ດິນປ່າໄມ້, ອີງຕາມລັກສະນະການ ນຳໃຊ້ທີ່ດິນ ຄື:

a. **ການນຳໃຊ້ທີ່ດິນແບບຖາວອນ** ເພື່ອທີ່ຢູ່ອາໄສ, ການປຸກສ້າງຖາວອນ ແລະ ການກະສິກຳຖາວອນ: ຄວນອອກໃບຕາດິນສ່ວນບຸກຄົນ ແລະ ໃບຕາດິນຂອງລັດເພື່ອເປົ້າໝາຍລວມໝູ່.

b. **ການນຳໃຊ້ທີ່ດິນແບບບໍ່ຖາວອນ** ໃນວຽກງານກະສິກຳ ເຊັ່ນ: ລ້ຽງສັດ, ການປູກພືດລົ້ມລຸກ (ທີ່ມີວົງຈອນການເຕີບໃຫຍ່ໜ້ອຍກວ່າໜຶ່ງປີ), ຫຼື ການປູກພືດໝຸນວຽນແບບຍືນຍົງ ແລະ ມີການຄວບຄຸມ: ຄວນອອກໃບຢັ້ງຢືນການນຳໃຊ້ທີ່ດິນ ສ່ວນບຸກຄົນ ຫຼື ລວມໝູ່.

c. **ປ່າໄມ້ບ້ານ**: ຄວນອອກໃບຢັ້ງຢືນການນຳໃຊ້ທີ່ດິນ ຫຼື ສັນຍາຄຸ້ມຄອງແລະປົກປັກຮັກສາປ່າໄມ້ບ້ານ (VFMCC), ເຊິ່ງກຳນົດສະຖານະການຄອບຄອງນຳໃຊ້ຂອງເຂົາເຈົ້າຢ່າງຈະແຈ້ງ.

**2.** ການອອກ**ໃບຕາດິນໃນທີ່ດິນປ່າໄມ້ລັດ ແມ່ນເພື່ອຢັ້ງຢືນກຳມະສິດກ່ຽວກັບທີ່ດິນຂອງບຸກຄົນຫຼືລວມໝູ່,ການອອກໃບຢັ້ງຢືນການນຳໃຊ້ທີ່ດິນ ແລະ ສັນຍາ VFMCC ແມ່ນເພື່ອຢັ້ງຢືນສິດຂອງບຸກຄົນ ຫຼື ລວມໝູ່ໃນການນຳໃຊ້ທີ່ດິນຂອງລັດ.** ໃບຢັ້ງຢືນການນຳໃຊ້ທີ່ດິນ ແລະ ສັນຍາ VFMCC ຄວນມີລັກສະນະຖາວອນຄືກັບໃບຕາດິນ, ໂດຍບໍ່ຈຳກັດໄລຍະເວລາ.

**3.** ກຳນົດ**ມາດຕະຖານຂັ້ນພື້ນຖານຂອງແຜນນຳໃຊ້ທີ່ດິນ ແລະ ເຄື່ອງມືການວາງແຜນທີ່ເໝາະສົມອື່ນໆ ໃນການກຳນົດເງື່ອນໄຂທີ່ຈະໄດ້ຮັບສິດຕໍ່ທີ່ດິນປະເພດຕ່າງໆ**, ເຊິ່ງລວມມີ:

a. ການແບ່ງເຂດ ແລະ ປະເພດປ່າທັງໝົດພາຍໃນບ້ານ.

b. ການແບ່ງເຂດທີ່ມີເງື່ອນໄຂໃນການຈັດປະເພດຂອງສິດຕໍ່ທີ່ດິນທີ່ແຕກຕ່າງກັນ ຕາມທີ່ໄດ້ລະບຸໄວ້ໃນຂໍ້ສະເໜີແນະນຳ ທີ 1.

c. ຮັບປະກັນໃຫ້ຊຸມຊົນທີ່ໄດ້ຮັບຜົນກະທົບ ມີສ່ວນຮ່ວມຢ່າງເຕັມທີ່ໃນຂະບວນການປະຕິບັດ;

d. ຮັບປະກັນໃຫ້ມີການສະໜອງແຜນທີ່ ແລະ ຂໍ້ມູນລະຫວ່າງພະແນກການທ້ອງຖິ່ນທີ່ກ່ຽວຂ້ອງ, ໃຫ້ແກ່ຊຸມຊົນທີ່ໄດ້ຮັບຜົນກະທົບ ແລະ ປະຊາຊົນທົ່ວໄປ.

e. ເຮັດໃຫ້ການຈັດຕັ້ງປະຕິບັດວ່ອງໄວ ເພື່ອໃຫ້ສິດຄອບຄອງນຳໃຊ້ ແລະ ສິດນຳໃຊ້ທີ່ດິນທີ່ຄົບເງື່ອນໄຂ ໃຫ້ຖືກຕ້ອງເປັນທາງການ.

**4.** ຮັບປະກັນໃຫ້ມີການປັບປຸງ ຫຼື ກຳນົດ **ເຂດຄຸ້ມຄອງປ່າໄມ້ໃນລະດັບມະຫາພາກສຳລັບບັນດາບ້ານທີ່ຢູ່ໃນທີ່ດິນປ່າໄມ້** ໃຫ້ສຳເລັດຢ່າງທັນການ, ເພື່ອກຳນົດ ແລະ ແຍກພື້ນທີ່ໃຫ້ຈະແຈ້ງລະຫວ່າງ ເຂດທີ່ຄວນປົກປັກຮັກສາຢ່າງເຂັ້ມງວດ (ເຂດຫວງຫ້າມເດັດຂາດ) ແລະ ເຂດທີ່ນຳໃຊ້ໂດຍຊຸມຊົນ (ເຂດຄຸ້ມຄອງການນຳໃຊ້ ແລະ ເຂດກັນຊົນ). ພັກດັນການກຳນົດເຂດຄຸ້ມຄອງການນຳໃຊ້ ແລະ ເຂດກັນຊົນ ໃຫ້ດຳເນີນແຕ່ລຸ່ມຂຶ້ນເທິງ ໂດຍຜ່ານແຜນການທີ່ໄດ້ກວດກາຄັກແນ່ແລ້ວ ດັ່ງທີ່ໄດ້ອະທິບາຍໄວ້ໃນຂໍ້ສະເໜີແນະນຳ ທີ 3 ພາຍໃຕ້ການນຳພາຂອງ ກະຊວງກະສິກຳ ແລະ ປ່າໄມ້.

ບົດສັງລວມຫຍໍ້ສະບັບນີ້ ໄດ້ສ້າງຂຶ້ນໂດຍກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG) ຊຶ່ງໄດ້ຮ່ວມກັນພັດທະນາຂຶ້ນໂດຍກຸ່ມທີ່ປຶກສາດ້ານກົດໝາຍທີ່ດິນ ທີ່ປະກອບມີ ທີ່ປຶກສາເອກະລາດ, ໂຄງການ ແລະ ອົງການຈັດຕັ້ງຕ່າງໆລວມມີ: ອົງການອາຫານ ແລະ ການກະເສດຂອງສະຫະປະຊາຊາດ (FAO), ອົງການ Deutsche Gesellschaft für Internationale Zusammenarbeit (GIZ), ໂຄງການຄຸ້ມຄອງທີ່ດິນພາກພື້ນແມ່ນ້ຳຂອງ (MRLG), ສູນສຳລັບປະຊາຊົນ ແລະ ປ່າໄມ້ (RECOFTC), ອົງການອະນຸລັກສັດປ່າ (WCS) ແລະ ກອງທຶນສັດປ່າໂລກ (WWF).

ບົດສັງລວມຫຍໍ້ນີ້ຂຽນໂດຍ ທ່ານ Julian Derbidge, ທົບທວນ ແລະ ດັດແກ້ໂດຍ ທ່ານ ນາງ Akiko Inoguchi, ທ່ານ ອາວະກາດ ພະສວຍໄຊງາມ, ທ່ານ Edwin Payuan, ທ່ານ ນາງ Eva Prediger, ທ່ານ ນາງ Natalie Y. Campbell, ທ່ານ ນາງ ມະໂນລີ ສີສະຫວັນ ແລະ ທ່ານ ວິລະເດດ ສີສຸລາດ.

**ການອ້າງອີງເຕັມ:** Derbidge, J. (2021). *Tenure Rights in State Forestland of Lao PDR*, Briefing Note 1#. Vientiane: LIWG.

ຜົນງານນີ້ໄດ້ຮັບອະນຸຍາດພາຍໃຕ້ *Creative Commons Attribution-NonCommercial-ShareAlike 4.0 International (CC BY-NC-SA 4.0)*

**ການຈຳກັດຄວາມຮັບຜິດຊອບ**

LIWG ສະໜອງຂໍ້ມູນນີ້ ຄືດັ່ງເປັນການບໍລິການໃຫ້ສາທາລະນະ ເພື່ອຈຸດປະສົງດ້ານຂໍ້ມູນຂ່າວສານ ແລະ ການສຶກສາ, ໂດຍອີງໃສ່ຂໍ້ມູນທີ່ຜູ້ເຂົ້າຮ່ວມໃນກຸ່ມນີ້ເຫັນວ່າເປັນຂໍ້ມູນທີ່ເຊື່ອຖືໄດ້ ໂດຍບໍ່ມີສະຖານະທາງດ້ານກົດໝາຍໃດໆ. ຄວາມຄິດເຫັນທີ່ສະແດງອອກໃນບົດສັງລວມຫຍໍ້ສະບັບນີ້ ແມ່ນໄດ້ມາຈາກຄວາມຄິດ ແລະ ການເຮັດວຽກຮ່ວມກັນຂອງທີມງານ ແລະ ຖືກຮັບຮອງໂດຍກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG) ແຕ່ພຽງຜູ້ດຽວ.

ທັດສະນະ, ຄວາມຄິດເຫັນ ແລະ ການຕີຄວາມໝາຍທີ່ສະແດງອອກໃນສິ່ງພິມນີ້ ແມ່ນຂອງຜູ້ຂຽນ ແລະ ຜູ້ປະກອບສ່ວນ. ບໍ່ຄວນຖືກຕີຄວາມໝາຍວ່າເປັນທັດສະນະທາງການ ຫຼືບໍ່ເປັນທາງການ ຫຼືຈຸດຢືນຂອງ SDC, ເຢຍລະມັນ ແລະ ລັກເຊມເບີກ.

**ສະໜັບສະໜູນໂດຍ**

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra
Swiss Agency for Development and Cooperation SDC

german cooperation
DEUTSCHE ZUSAMMENARBEIT

GRAND DUCHY OF LUXEMBOURG

Brot für die Welt